

# SuPER WE Coffee

## ວຽກເດັ່ນຂອງ ໂຄງການປີ 2022

**ສິງຫາ:** ການເກັບກຳຂໍ້ມູນພື້ນຖານດ້ານເສດຖະກິດ-ສັງຄົມ

**ກັນຍາ:** ກອງປະຊຸມປະຈຳປີຄັ້ງທີ່ 4 ຂອງໂຄງການສະວິສອາຊີ

**ຕຸລາ:** ສະເຫຼີມສະຫຼອງ ວັນກາເຟສາກົນ

**ພະຈິກ:** ພິທີເປີດໂຄງການ ແລະ ເຊັນບົດບັນທຶກຄວາມເຂົ້າໃຈ. ການເກັບກຳຂໍ້ມູນວິເຄາະບົດບາດທາງເພດທາງດ້ານຕ່ອງໂສ້ມູນຄ່າເພີ່ມຂອງຜະລິດຕະພັນກາເຟ

**ທັນວາ:** ກອງປະຊຸມລິເລີ່ມໂຄງການ ແລະ ການລົງຢ້ຽມຢາມກຸ່ມຜະລິດກາເຟ

### ຜູ້ທີ່ໄດ້ຮັບຜົນປະໂຫຍດ
ສິງຫາ - ທັນວາ 2022

ຊາວສວນກາເຟ
**379**

ແມ່ຍິງຊົນເຜົ່າ
**209**

## ປະຫວັດຄວາມເປັນມາ

ໂຄງການ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍຜ່ານລະບົບຕ່ອງໂສ້ ການສ້າງມູນຄ່າເພີ່ມ ຂອງຜະລິດຕະພັນກາເຟ ທີ່ມີຈັນຍາບັນ ແລະ ເປັນມິດກັບສິ່ງແວດລ້ອມ ໃນແຂວງ ເຊກອງ ຈະໄດ້ສ້າງຄວາມອາດສາມາດ ໃຫ້ຊາວສ່ວນກາເຟ ສາມາດຍົກສະມັດຕະພາບ ການຜະລິດກາເຟໃຫ້ໄດ້ຜົນຜະລິດສູງ ແລະ ມີຄຸນະພາບ ແລະ ເພີ່ມລາຍຮັບໃນຄອບຄົວໃຫ້ສູງຂຶ້ນ ໂດຍຜ່ານ ການສະໜັບສະໜູນສ້າງຕັ້ງສູນແປຮູບກາເຟ, ສະໜອງເຕັກນິກ ການປູກ ແລະ ການແປຮູບໃຫ້ແກ່ກຸ່ມຜະລິດ, ສະໜອງອຸປະກອນທີ່ຈຳເປັນໃນການປູກ ແລະ ແປຮູບກາເຟ. ຈຸດປະສົງຂອງໂຄງການແມ່ນເພື່ອ ສະໜັບສະໜູນການພັດທະນາເສດຖະກິດ ທີ່ເປັນມິດກັບສິ່ງແວດລ້ອມ, ເພີ່ມທະວີການຮ່ວມມືກັບໜ່ວຍງານສະຫະກອນ ເຊັ່ນດຽວກັນກັບການສ້າງຄວາມສາມາດໃຫ້ແກ່ແມ່ຍິງຜູ້ຜະລິດກາເຟໂດຍເຊື່ອມໂຍງການຮ່ວມມືວຽກງານບົດບາດທາງເພດ, ການເປັນຜູ້ນຳ ແລະ ຜູ້ປະກອບການ.

## ທີ່ຕັ້ງໂຄງການ





## ສິງຫາ

### ການເກັບກຳຂໍ້ມູນພື້ນຖານ ດ້ານເສດຖະກິດ-ສັງຄົມ

ການເກັບກຳຂໍ້ມູນ ແມ່ນເລີ່ມແຕ່ ວັນທີ 29 ສິງຫາ 2022 - 3 ກັນຍາ 2022. ເຊິ່ງໄດ້ສຳເລັດການເກັບກຳຂໍ້ມູນພື້ນຖານໃນ 10 ບ້ານເປົ້າໝາຍ ໂດຍມີຜູ້ເຂົ້າຮ່ວມທັງໝົດ 274 ຄົນ. ການເກັບກຳໃນຄັ້ງນີ້, ແມ່ນໄດ້ມີການປະເມີນສະພາບທົ່ວໄປຂອງບ້ານ, ເສດຖະກິດ-ສັງຄົມ, ເຕັກນິກການປູກກາເຟ, ບົດບາດທາງເພດໃນປັດຈຸບັນ, ສິ່ງທ້າທາຍໃນການຈັດຕັ້ງປະຕິບັດກິດຈະກຳທີ່ຜ່ານມາ. ຂໍ້ມູນດັ່ງກ່າວ ຈະໄດ້ຖືກນຳໄປສະໜັບສະໜູນໃຫ້ແກ່ໂຄງການ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍຜ່ານລະບົບຕ່ອງໂສ້ ການສ້າງມູນຄ່າເພີ່ມ ຂອງຜະລິດຕະພັນກາເຟ ທີ່ມີຈັນຍາບັນ ແລະ ເປັນມິດກັບສິ່ງແວດລ້ອມ ໃນການປັບປຸງກິດຈະກຳຂອງໂຄງການຢູ່ໃນພື້ນທີ່ເປົ້າໝາຍ.






## ກັນຍາ

### ກອງປະຊຸມປະຈຳປີຄັ້ງທີ່ 4 ຂອງ SWITCH-Asia

ໃນລະຫວ່າງວັນທີ 22 - 23 ກັນຍາ  2022 , ທ່ານ ຈັດຕຸຄົງ ໄພຈິດ, ຜູ້ປະສານງານຂອງໂຄງການ ຊຸບເປີວີ ໄດ້ເຂົ້າຮ່ວມກອງປະຊຸມປະຈຳປີ ຄັ້ງທີ່ 4 ຂອງ SWITCH-Asia ເຊິ່ງຈັດຂຶ້ນໂດຍ EU SWITCH-Asia ໃນກຸງເທບ, ປະເທດໄທ.  ກອງປະຊຸມໄດ້ຄົ້ນຄ້ວາໃນຫົວຂໍ້ກ່ຽວກັບ ການຫັນເປັນຕະຫຼາດ ແລະ ການມີສ່ວນຮ່ວມ ຂອງພາກເອກະຊົນ, ການສະໜອງທຶນສີຂຽວໃຫ້ແກ່ ທຸລະກິດຂະໜາດນ້ອຍ, ເພີ່ມທະວີການຮ່ວມມືໃນພາກພື້ນເຂົ້າສູ່ SCP ແລະ ວົງເງິນ, ຍຸດທະສາດການສື່ສານ ແລະ ການເຜີຍແຜ່ SCP, ການພົວພັນກັບບັນດາສະຖາບັນຄວາມຮູ້. ກອງປະຊຸມໃນຄັ້ງນີ້ຈະຊ່ວຍໃຫ້ໂຄງການ ຊຸບເປີວີ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີຄວາມຖືກຕ້ອງ ແລະ ມີຄວາມຍືນຍົງ.





# ຕຸລາ

## ສະເຫຼີມສະຫຼອງ ວັນກາເຟສາກົນ



ໃນວັນທີ 1 ຕຸລາ 2022, ກຸ່ມຜະລິດກາເຟແມ່ຍິງຊົນເຜົ່າ ຂອງໂຄງການ ເສີມສ້າງ ຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍຜ່ານລະບົບຕ່ອງໂສ້ ການສ້າງມູນຄ່າເພີ່ມ ຂອງ ຜະລິດຕະພັນກາເຟ ທີ່ມີຈັນຍາບັນ ແລະ ເປັນມິດກັບສິ່ງແວດລ້ອມ ໄດ້ເຂົ້າຮ່ວມງານ ບຸນກາເຟບ້ານເຮົາ ປະຈຳປີ 2022 ຈັດທີ່ສູນການຄ້າ ວຽງຈັນເຊັນເຕີ ເພື່ອວາງສະແດງ ຜະລິດຕະພັນ ກາເຟພູດອຍດາກຈຶງ. ຜ່ານການເຂົ້າຮ່ວມງານໃນຄັ້ງນີ້, ພວກເຂົາໄດ້ ຮຽນຮູ້ກ່ຽວກັບຄວາມສຳຄັນຂອງການຕະຫຼາດ ແລະ ລວມໄປເຖິງໄດ້ມີໂອກາດໃນ ການສົນທະນາ ແລະ ແລກປ່ຽນປະສົບການກັບຜູ້ທີ່ມັກຮັກໃນກາເຟ ແລະ ກຸ່ມຜູ້ຜະລິດ ກາເຟຈາກທົ່ວທຸກບ່ອນພາຍໃນປະເທດ.



# ພະຈິກ

## ພິທີເປີດໂຄງການ ແລະ ເຊັນບົດບັນທຶກຄວາມເຂົ້າໃຈ



ໃນວັນທີ 1 ພະຈິກ 2022, ໂຄງການ ເສີມສ້າງ ຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍ ຜ່ານລະບົບຕ່ອງໂສ້ ການສ້າງມູນຄ່າເພີ່ມ ຂອງຜະລິດຕະພັນກາເຟ ທີ່ມີຈັນຍາບັນ ແລະ ເປັນມິດກັບສິ່ງແວດລ້ອມ ໄດ້ເລີ່ມເປີດໂຄງການ ແລະ ເຊັນບົດບັນທຶກຄວາມ ເຂົ້າໃຈລະຫວ່າງ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ແລະ ພະແນກກະສິກຳ ແລະ ປ່າໄມ້ແຂວງ. ຊາວສວນກາເຟ 400 ຄົນ (ແມ່ຍິງກວມ 70%) ໃນ 15 ບ້ານ ທີ່ເມືອງ ດາກຈຶງ, ແຂວງ ເຊກອງ ທີ່ຈະໄດ້ຮັບການສະໜັບສະໜູນ ປັບປຸງຄຸນະພາບ ການຜະລິດກາເຟ ແລະ ຄວາມອາດສາມາດໃນການສ້າງເຄືອຂ່າຍ ເພື່ອໃຫ້ເຂົ້າເຖິງ ຕະຫຼາດກາເຟທັງພາຍໃນ ແລະ ຕ່າງປະເທດ ຄຽງຄູ່ໄປກັບການປົກປັກຮັກສາສິ່ງແວດ ລ້ອມໃຫ້ມີຄວາມຍືນຍົງ.



## ພະຈິກ

### ການເກັບກຳຂໍ້ມູນ ວິເຄາະບົດບາດທາງເພດ ທາງດ້ານຕ່ອງໂສ້ມູນຄ່າເພີ່ມ ຂອງຜະລິດຕະພັນກາເຟ

ໃນວັນທີ 17 - 21 ພະຈິກ 2022, ພະນັກງານໂຄງການ ໄດ້ດຳເນີນການເກັບກຳຂໍ້ມູນ ວິເຄາະບົດບາດທາງເພດທາງດ້ານຕ່ອງໂສ້ມູນຄ່າເພີ່ມ ຂອງຜະລິດຕະພັນກາເຟ. ມີຜູ້ເຂົ້າຮ່ວມທັງໝົດ 105 ຄົນ, ໃນນັ້ນ ມີຊາວບ້ານ 95 ຄົນ, ແມ່ຍິງ 60 ຄົນ ຈາກ 5 ບ້ານ (ດາກຣາຍ, ດາກເດີນ, ດາກກັງ, ດາກເດັນ ແລະ ດາກເອີຍ). ໜຶ່ງໃນຂໍ້ມູນທີ່ສຳຄັນແມ່ນເຫັນວ່າ ຜູ້ຊາຍແມ່ນໄດ້ສະໜັບສະໜູນໃຫ້ແມ່ຍິງມີສ່ວນຮ່ວມຫຼາຍຂຶ້ນ ແລະ ເຊື່ອວ່າແມ່ຍິງສາມາດປະສົບຜົນສຳເລັດໃນການຜະລິດກາເຟຄືກັນກັບຜູ້ຊາຍ. ຍິ່ງໄປກວ່ານັ້ນ, ຜູ້ຊາຍສ່ວນຫຼາຍ ແມ່ນເຊື່ອວ່າແມ່ຍິງມີຄວາມສາມາດຫຼາຍກວ່າຜູ້ຊາຍ, ເຊິ່ງສິ່ງນີ້ ໄດ້ຊີ້ໃຫ້ເຫັນເຖິງປະສິດທິພາບຂອງຕົວແມ່ຍິງ ແລະ ດັ່ງນັ້ນ, ຈຶ່ງຈຳເປັນຫຼາຍທີ່ຈະຕ້ອງພັດທະນາໃຫ້ມີແມ່ຍິງທີ່ເປັນຕົວແບບ.





## ທັນວາ

### ກອງປະຊຸມລິເລີ່ມໂຄງການ ແລະ ການລົງຢ້ຽມຢາມກຸ່ມຜະລິດກາເຟ

ໃນວັນທີ 14 ທັນວາ 2022, ກອງປະຊຸມເລີ່ມໂຄງການໄດ້ຈັດຂຶ້ນທີ່ນະຄອນຫຼວງວຽງຈັນ ໂດຍການເຂົ້າຮ່ວມຂອງຜູ້ຕາງໜ້າຈາກ ພະແນກກະສິກຳ ແລະ ປ່າໄມ້ແຂວງເຊກອງ, ສະຫະພັນແມ່ຍິງແຂວງ ເຊກອງ, EU SWITCH-Asia ແລະຊາວກະສິກອນກາເຟ. ກອງປະຊຸມໄດ້ວາງແຜນການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການລະຫວ່າງອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ, ຄູ່ຮ່ວມງານພາກລັດຖະບານ, Halieus, 4FORM, International Cooperative Alliance, International Training Center ແລະ Fairtrade Italia. ພາຍໃນກອງປະຊຸມແມ່ນໄດ້ມີການລາຍງານກ່ຽວກັບການຈັດຕັ້ງປະຕິບັດກິດຈະກຳໃນ 5 ເດືອນທີ່ຜ່ານມາ ແລະ ນອກຈາກນັ້ນ, ຍັງໄດ້ລົງຢ້ຽມຢາມບ້ານຄູນໄຊ ແລະ ບ້ານດາກຢ່ອຍ ເພື່ອພົບປະ ແລະ ສົນທະນາກັບກຸ່ມຜູ້ຜະລິດກາເຟກ່ຽວກັບການຜະລິດກາເຟທີ່ມີຄວາມຍືນຍົງ ແລະ ເປັນມິດກັບສິ່ງແວດລ້ອມ.





# ສຽງຂອງການປ່ຽນແປງ

## ການສ້າງຄວາມເຂັ້ມແຂງທາງເສດຖະກິດໃຫ້ແກ່ແມ່ຍິງ

ບັນທຶກ ແລະ ແປໂດຍ: ທ່ານ ຈັດຕຸລິງ ໄພຈິດ



ທ່ານ ນາງ ເພັດສະໝັນ ກັບເຮືອນຕາກກາເຟຂອງລາວ.

"ຂ້າພະເຈົ້າຢາກບອກແມ່ຍິງທຸກຄົນວ່າ ພວກເຂົາມີຄວາມສາມາດເປັນຜູ້ນຳ. **ຂໍພຽງແຕ່ໝັ້ນໃຈໃນຕົນເອງ ແລະ ມີຄວາມກ້າຫານໃນການປະກອບຄຳຄິດເຫັນ ແລະ ມີຄວາມຮັບຜິດຊອບສູງ.** ສິ່ງທີ່ສຳຄັນທີ່ສຸດ ທ່ານຕ້ອງເປັນຄົນຄິດບວກ. [ໃນດ້ານຂະແໜງ ການກາເຟ] ຕ້ອງເປີດໃຈໃນການຮຽນຮູ້ເຕັກນິກໃໝ່ເພື່ອເພີ່ມມູນຄ່າການຜະລິດໃຫ້ກັບຄອບຄົວ ເຊັ່ນດຽວກັບເປັນພື້ນຖານໃນການສ້າງເສດຖະກິດໃຫ້ແກ່ຊຸມຊົນ"

**ທ່ານ ນາງ ເພັດສະໝັນ, ຜູ້ຜະລິດກາເຟ**
**ບ້ານຄູນໄຊ, ເມືອງ ດາກຈຶງ**
**ແຂວງ ເຊກອງ**



ທ່ານ ນາງ ຈິນຊີ ມີຄວາມສຸກກັບສວນກາເຟຂອງລາວ.

"ຂ້ອຍຮູ້ສຶກພູມໃຈ ແລະ ດີໃຈຫຼາຍທີ່ໄດ້ເປັນສ່ວນໜຶ່ງໃນການເຜີຍແຜ່ປະສົບການ ການເປັນຜູ້ນຳໃຫ້ແກ່ ແມ່ຍິງໃນຊຸມຊົນ **ເພື່ອຊ່ວຍຊຸກຍູ້ໃຫ້ພວກເຂົາມີຄວາມກ້າຫານ ໃນການຕັດສິນໃຈ, ມີຄວາມໝັ້ນໃຈໃນການສະເໜີຄວາມຄິດເຫັນ ແລະ ເຂົ້າໃຈໃນ ການສ້າງລາຍຮັບເພີ່ມຂຶ້ນ ເພື່ອພັດທະນາເສດຖະກິດໃນຄອບຄົວຂອງພວກເຂົາເອງ.**"

**ທ່ານ ນາງ ຈິນຊີ, ຜູ້ຜະລິດກາເຟ**
**ບ້ານ ດາກເດັນ, ເມືອງ ດາກຈຶງ**
**ແຂວງ ເຊກອງ**

## ຕິດຕໍ່ພວກເຮົາໄດ້ທີ່:


**ທ່ານ ນາງ ແກ້ວອຳພອນ ສຸວັນນະພູມ**
ຫົວໜ້າ ອົງການ
ເບີໂທ: (+856) 20 5564 2235
ອີເມລ: keoamphone.souvannaphoum@careint.org

**ທ່ານ ສອນອຸທິດ ພັນທະລັງສີ**
ຫົວໜ້າ ຫ້ອງການ ແຂວງ ເຊກອງ
ເບີໂທ: (+856) 20 5561 9915
ອີເມລ: soneouthid.phanthalangsy@careint.org

**ທ່ານ ນາງ ບົວຄຳ ດວງປັນຍາ**
ຫົວໜ້າ ຝ່າຍສື່ສານ ແລະ ເຕັກໂນໂລຊີຂໍ້ມູນຂ່າວສານ
ເບີໂທ: (+856) 20 5560 3139
ອີເມລ: bouakham.douangpanya@careint.org

ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ
ຕູ້ ປ.ນ 4328, ຖະໜົນໜອງສ້າງທໍ່,
ບ້ານ ໜອງສ້າງທໍ່, ເມືອງ ໄຊເສດຖາ,
ນະຄອນຫຼວງວຽງຈັນ, ສປປ ລາວ
ເບີໂທ: (+856-21) 217 727

ຫ້ອງການ ເຊກອງ
ເມືອງ ລະມາມ, ແຂວງ ເຊກອງ, ສປປ ລາວ
ເບີໂທ (+856-38) 215 010

Lao.info@careint.org
www.careint.org.la
Facebook/careint.org.la
CARE International in Lao PDR


care®